**ມິຊຊາອາທິດທີ 19 ການົດທຳມະດາ ປີ B**

**ວັນທີ 8 ສິງຫາ 2021**



**ພຣະວໍລະສານໂດຍນັກບຸນຢວງ 6, 41-51**

ໃນເວລານັ້ນ, ພວກຢິວພາກັນຈົ່ມຍ້ອນພຣະເຢຊູເຈົ້າກ່າວວ່າ: "ເຮົາແມ່ນປັງທີ່ລົງມາຈາກສະຫວັນ". ພວກເຂົາເວົ້າວ່າ: "ເພິ່ນນີ້ບໍ່ແມ່ນເຢຊູບຸດຊາຍຂອງຢໍແຊັບບໍ? ພວກເຮົາຮູ້ຈັກພໍ່ແມ່ຂອງເພິ່ນດີ. ເປັນຫຍັງເພິ່ນຈຶ່ງກ້າເວົ້າວ່າ: ເຮົາລົງມາຈາກສະຫວັນ?"

ພຣະເຢຊູເຈົ້າກ່າວຕ້ານພວກເຂົາວ່າ: "ພວກເຈົ້າຢ່າພາກັນຈົ່ມເລີຍ, ບໍ່ມີໃຜມາຫາເຮົາໄດ້ຖ້າວ່າພຣະບິດາຜູ້ຊົງໃຊ້ເຮົາມາບໍ່ດຶງເຂົາມາຫາເຮົາ. ສ່ວນເຮົາ, ເຮົາຈະໃຫ້ເຂົາກັບເປັນຄືນມາໃນວັນສິ້ນໂລກ. ມີຄຳຂຽນໄວ້ໃນໜັງສືຂອງພວກປະພາສົກວ່າ: "ພຣະເຈົ້າເອງຈະສັ່ງສອນເຂົາທັງຫລາຍ." ຜູ້ໃດຟັງຄຳສັ່ງສອນອົບຮົມຂອງພຣະບິດາເຈົ້າ, ຜູ້ນັ້ນກໍມາຫາເຮົາ". ບໍ່ມີໃຜເຄີຍເຫັນພຣະບິດາ, ເວັ້ນແຕ່ຜູ້ທີ່ມາຈາກພຣະເຈົ້າ; ຜູ້ນັ້ນຜູ້ດຽວໄດ້ເຫັນພຣະບິດາ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: "ຜູ້ໃດເຊື່ອເຖິງເຮົາ ຜູ້ນັ້ນມີຊີວິດນິຣັນດອນ".

"ເຮົາແມ່ນປັງປະທານຊີວິດ. ເວລາຢູ່ທີ່ປ່າວນັ້ນ, ບັນພະບຸຣຸດຂອງພວກເຈົ້າໄດ້ກິນມັນນາ, ແລ້ວກໍຕາຍໄປ; ສ່ວນຜູ້ທີ່ຈະກິນປັງທີ່ລົງມາຈາກສະຫວັນນັ້ນຈະບໍ່ຕາຍ. ເຮົາແມ່ນປັງຊົງຊີວິດທີ່ລົງມາຈາກສະຫວັນ. ຜູ້ໃດກິນປັງນີ້ຈະມີຊີວິດຢູ່ຕະຫລອດນິຣັນດອນ. ແລະປັງທີ່ເຮົາຈະປະທານໃຫ້ເພື່ອບັນດານຊີວິດແກ່ໂລກນັ້ນ ແມ່ນເນື້ອຂອງເຮົາເອງ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ:**

ວາຈາພຣະເຈົ້າວັນອາທິດນີ້ແມ່ນສືບຕໍ່ຈາກອາທິດແລ້ວກ່ຽວກັບການສົນທະນາລະຫວ່າງພຣະເຢຊູເຈົ້າກັບພວກຢິວເຖິງການໄຂສຳແດງປັງຊົງຊີວິດທີ່ລົງມາຈາກສະຫວັນ. ສິ່ງທີ່ຄັດແຍ່ງກັນໃນການສົນທະນານີ້ກໍຄື ຝ່າຍໜຶ່ງພຣະເຢຊູເຈົ້າໄຂສຳແດງເຖິງຕົວຂອງພຣະອົງເອງຜູ້ຊຶ່ງລົງມາຈາກສະຫວັນເພື່ອມອບຊີວິດຂອງພຣະອົງໃຫ້ມະນຸດຜ່ານການຕາຍແລະການກັບເປັນຄືນມາຂອງພຣະອົງ. ຖ້າຜູ້ໃດຢາກມີຊີວິດກໍຕ້ອງເຊື່ອໃນພຣະອົງດ້ວຍການຟັງວາຈາແລະຮັບກິນເນື້ອແລະກາຍຂອງພຣະອົງເປັນອາຫານທີ່ນຳພວກເຮົາໄປສູ່ຊີວິດນິລັນດອນ. ສ່ວນຝ່າຍພວກຢິວ, ພວກເຂົາບໍ່ເຂົ້າໃຈເຖິງສິ່ງທີ່ພຣະເຢຊູເຈົ້າໄຂສຳແດງ. ເພາະຄວາມນຶກຄິດຂອງພວກເຂົາເປັນຄວາມຄິດແບບປະສາມະນຸດ. ຄວາມຄິດນີ້ທຳໃຫ້ພວກເຂົາແນມເບິ່ງພຣະເຢຊູເຈົ້າພຽງແຕ່ຄົນທຳມະດາ, ລູກຂອງຊ່າງໄມ້ຊາວນາຊາແລັດຄົນໜຶ່ງເທົ່ານັ້ນ. ເຫດໃດຄົນທຳມະດາຜູ້ນີ້ຈຶ່ງຮູ້ຈັກສິ່ງໃນສະຫວັນແລະສາມາດລ້ຽງເກືອຄົນອື່ນໃຫ້ມີຊີວິດນິລັນດອນໄດ້. ຄວາມຄິດນີ້ເປັນອຸປະສັກກີດຂວາງພວກຢິວເຊື່ອໃນພຣະເຢຊູເຈົ້າ. ເຖິງປານນັ້ນກໍດີ, ກໍມີບາງຄົນໃນພວກເຂົາທີ່ເຊື່ອເຖິງພຣະອົງ.

ພວກເຮົາຜູ້ເປັນກຣິສຕັງກໍເຊັ່ນດຽວກັນ. ບາງຄັ້ງ, ຊີວິດນິລັນດອນສຳລັບພວກເຮົາເປັນສິ່ງທີ່ຫ່າງໄກແລະເປັນສິ່ງທີ່ບໍ່ສຳຄັນກວ່າຊີວິດຢູ່ໃນໂລກນີ້. ດ້ວຍເຫດນີ້, ພວກເຮົາຈຶ່ງອອກແຮງຊອກຫາສິ່ງທີ່ເປັນຂອງໂລກຫລາຍກວ່າສິ່ງທີ່ເປັນຂອງສະຫວັນ. ພວກເຮົາຊອກຫາອາຫານທີ່ສູນເສຍເປັນຫລາຍກວ່າອາຫານທີ່ໃຫ້ຊີວິດນິລັນດອນ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກຊອກຫາອາຫານທີ່ບໍ່ສູນເສຍເປັນຄືວາຈາແລະພຣະກາຍ, ພຣະໂລຫິດຂອງພຣະອົງ. ເພື່ອລູກຈະໄດ້ຊີມລົດຊາດແຫ່ງຊີວິດນິລັນດອນຕັ້ງແຕ່ຢູ່ໃນໂລກນີ້ ແລະເປັນໜຶ່ງດຽວກັບພຣະອົງຜູ້ເປັນປັງຊົງຊີວິດທີ່ລົງມາຈາກສະຫວັນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ